ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2710 /ກງ

ນະຄອນຫຼວງວຽງຈັນ, ວັນທີ 12 ຕຸລາ 2020

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງເອົາລະບົບ ຄຸ້ມຄອງ, ຕິດຕາມການອອກໃບຮັບເງິນ ຜ່ານລະບົບ ທະນາຄານ, ຄັງເງິນແຫ່ງຊາດ ແລະ ສະຫຼຸບລາຍງານແບບອ່ອງໄວ

- ອີງຕາມ ກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 18 ພຶດສະພາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 5146/ກງ, ລົງວັນທີ 27 ທັນວາ 2019 ວ່າດ້ວຍ ການຮັບຮອງແບບຟອມໃບຮັບເງິນຂອງຄັງເງິນແຫ່ງຊາດ ເພື່ອນຳໃຊ້ເປັນເອກະສານຢັ້ງຢືນການມອບພັນທະເຂົ້າ ງົບປະມານແຫ່ງລັດ ຜ່ານລະບົບທະນາຄານ;
- ອີງຕາມ ການຄົ້ນຄ້ວາ ນຳສະເໜີຂອງຄັງເງິນແຫ່ງຊາດ ສະບັບເລກທີ 4849/ຄງຊ, ລົງວັນທີ 07.10.2020.

ລັດຖະມົນຕີກະຊວງການເງິນ ຕົກລົງ:

ມາດຕາ 01: ເຫັນດີ ຮັບຮອງເອົາລະບົບ ຄຸ້ມຄອງ, ຕິດຕາມການອອກໃບຮັບເງິນຜ່ານລະບົບ ທະນາຄານ, ຄັງເງິນແຫ່ງຊາດ ແລະ ສະຫຼຸບລາຍງານແບບອ່ອງໄວ ເປັນລະບົບຄຸ້ມຄອງຂໍ້ມູນຂ່າວສານການເງິນ ຂອງຄັງເງິນແຫ່ງຊາດ ມີຊື່ເປັນພາສາອັງກິດ: Real Time Treasury Information System ຫຼື ຂຽນຫຍໍ້ RTIS.

ມາດຕາ 02: ມອບໃຫ້ຄັງເງິນແຫ່ງຊາດ, ຂະແໜງລາຍຮັບ, ທະນາຄານແຫ່ງ ສປປລາວ, ທະນາຄານທຸລະກິດຂອງລັດ, ບັນດາທະນາຄານທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ ເປັນເຈົ້າການຈັດຝຶກອົບຮົມ, ເຜີຍແຜ່ໃຫ້ພະນັກງານ ຕາມຂະແໜງການຂອງຕົນ ແຕ່ສູນກາງຮອດທ້ອງຖິ່ນ ແລະ ຈັດຕັ້ງຜັນຂະຫຍາຍລະບົບດັ່ງກ່າວ.

ມາດຕາ 03: ມອບໃຫ້ ຫ້ອງການກະຊວງການເງິນ, ຄັງເງິນແຫ່ງຊາດ, ຂະແໜງລາຍຮັບ, ທະນາຄານແຫ່ງ ສປປລາວ, ທະນາຄານທຸລະກິດຂອງລັດ, ບັນດາທະນາຄານທຸລະກິດ, ພະແນກການເງິນ ນະຄອນຫຼວງ-ແຂວງ, ຫ້ອງການ-ການເງິນເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 04: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ